ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

********************

ແຂວງຫົວພັນ

ເລກທີ...72.../ຈຂ

ຊຳເໜືອ, ວັນທີ 25.1.2016

# ຂໍ້ຕົກລົງ

## ວ່າດ້ວຍການຮັບຮອງການກຳນົດຂອບເຂດສະຫງວນທາງຫຼວງພາຍໃນແຂວງຫົວພັນ

- ອີງຕາມ ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນແຫ່ງ ສປປລາວ ສະບັບເລກທີ: 03/ສພຊ, ລົງວັນທີ: 21 ຕຸລາ 2003 ໝວດທີ III, ມາດຕາທີ 14 ວ່າດ້ວຍພາລະບົດບາດ, ສິດ ແລະ ໜ້າທີ່ຂອງເຈົ້າແຂວງ.
- ອີງຕາມໃບສະເໜີຂອງພະແນກ ຍທຂ ສະບັບເລກທີ: 108/ຍທຂ, ລົງວັນທີ: 13 ມັງກອນ 2016 ວ່າດ້ວຍການສະເໜີອອກຂໍ້ຕົກລົງການຮັບຮອງການກຳນົດເຂດສະຫງວນທາງຫຼວງພາຍໃນແຂວງຫົວພັນ.

ເນື່ອງຈາກວ່າໃນໄລຍະຜ່ານມາໄດ້ມີການລະເມີດລະບຽບກົດໝາຍກ່ຽວກັບທາງຫຼວງຢ່າງຫຼວງຫຼາຍໃນຂອບເຂດທົ່ວແຂວງຫົວພັນ ເພື່ອເພີ່ມທະວີຄວາມເປັນເຈົ້າການໃນການປົກປັກຮັກສາເຂດສະຫງວນຂອງທາງຫຼວງໃຫ້ສອດຄ່ອງກັບລະບຽບກົດໝາຍຢ່າງເຂັ້ມງວດມີຜົນສັກສິດ ແລະ ໃຫ້ໄດ້ຮັບຜົນດີ.

## ເຈົ້າແຂວງຕົກລົງ:

ມາດຕາ 01: ຮັບຮອງເອົາການກຳນົດຂອບເຂດສະຫງວນທາງຫຼວງພາຍໃນແຂວງຫົວພັນດັ່ງນີ້:

1. ທາງຫຼວງແຫ່ງຊາດ

1.1. ຊ່ວງຜ່ານເທດສະບານແຂວງ, ເທດສະບານເມືອງ, ກຸ່ມບ້ານ ແລະ ຕົວເມືອງນ້ອຍ ທີ່ຜັງເມືອງ, ຜັງບ້ານແລ້ວ ແມ່ນເຫັນດີໃຫ້ຕາມແຜນຜັງດັ່ງກ່າວໃນການຈັດຕັ້ງປະຕິບັດ ສ່ວນບ້ານ ຫຼື ຊຸມຊົນທີ່ບໍ່ທັນມີແຜນຜັງໃຫ້ກຳນົດເອົາເບື້ອງລະ 10 ແມັດ ນັບຈາກໃຈກາງທາງອອກໄປ.

1.2. ຊ່ວງຜ່ານທົ່ງນາ ແລະ ສວນ ແມ່ນເຫັນດີກຳນົດເອົາເບື້ອງລະ 15 ແມັດ ນັບຈາກໃຈກາງທາງອອກໄປ

1.3. ຊ່ວງຜ່ານເຂດພູ, ປ່າ ຫຼື ເຂດທຳການຜະລິດ ນອກຈາກທົ່ງນາແມ່ນເຫັນດີໃຫ້ສະຫງວນເບື້ອງລະ 25 ແມັດ ນັບຈາກໃຈກາງທາງອອກໄປ ເນື່ອງຈາກວ່າປ້ອງກັນການຖາງປ່າເຮັດໄຮ່ຂອງປະຊາຊົນ

- ເຂດທ່ອງທ່ຽວທຸລະກັນດານແມ່ນເຫັນດີໃຫ້ກຳນົດເອົາເບື້ອງລະ 25 ແມັດ ເພື່ອຫຼີກລຽງການບຸກລຸກ ຫຼື ທຳລາຍທຳມະຊາດ.

1.4. ຊ່ວງໂຄ້ງລັດສະໝີ 60 ແມ່ນສະຫງວນຕາມກົດໝາຍທາງຫຼວງ ຄວາມກ້ວາງເບື້ອງລະ 25 ແມັດ ນັບຈາກໃຈກາງທາງອອກໄປເນື່ອງຈາກວ່າອານາຄົດອາດມີການຕັດຄົດເພື່ອເປີດກ້ວາງ.

2. ທາງຫຼວງຂອງແຂວງ

2.1. ຊ່ວງຜ່ານເທດສະບານແຂວງ, ເທດສະບານເມືອງ, ກຸ່ມບ້ານ ແລະ ຕົວເມືອງນ້ອຍທີ່ມີຜັງເມືອງ, ຜັງບ້ານແລ້ວແມ່ນໃຫ້ ອີງຕາມແຜນຜັງດັ່ງກ່າວໃນການຈັດຕັ້ງປະຕິບັດ ສ່ວນບ້ານ ຫຼື ຊຸມຊົນທີ່ບໍ່ທັນມີແຜນຜັງແມ່ນເຫັນດີໃຫ້ກຳນົດເອົາເບື້ອງລະ 10 ແມັດ ນັບຈາກໃຈກາງທາງອອກໄປ.

2.2. ຊ່ວງຜ່ານທົ່ງນາ ແລະ ສວນ ແມ່ນເຫັນດີໃຫ້ກຳນົດເອົາເບື້ອງລະ 10 ແມັດ ນັບຈາກໃຈກາງທາງອອກໄປ.

2.3 ຊ່ວງຜ່ານເຂດພູ, ປ່າ ຫຼື ເຂດທຳການຜະລິດນອກຈາກທົ່ງນາແມ່ນເຫັນດີໃຫ້ສະຫງວນເບື້ອງລະ 25 ແມັດ ນັບແຕ່ໃຈກາງທາງອອກໄປເນື່ອງຈາກວ່າປ້ອງກັນການຖາງປ່າເຮັດໄຮ່ຂອງປະຊາຊົນ.

- ເຂດແຫຼ່ງທ່ອງທ່ຽວ ແລະ ທຸລະກັນດານພິເສດແມ່ນເຫັນດີໃຫ້ກຳນົດເອົາເບື້ອງລະ 50 ແມັດເພື່ອຫຼີກລຽງການບຸກລຸກ ຫຼື ທຳລາຍທຳມະຊາດ.

3. ທາງຫຼວງຂອງເມືອງ

3.1. ຊ່ວງຜ່ານເທດສະບານຂອງເມືອງ, ກຸ່ມບ້ານ ແລະ ຕົວເມືອງນ້ອຍທີ່ມີຜັງເມືອງ, ຜັງບ້ານແລ້ວ ແມ່ນໃຫ້ອີງຕາມແຜນຜັງດັ່ງກ່າວໃນການຈັດຕັ້ງປະຕິບັດ, ສ່ວນບ້ານ ຫຼື ຊຸມຊົນ, ທົ່ງນາ ແລະ ສວນທີ່ບໍ່ທັນມີແຜນຜັງ ແມ່ນອີງຕາມກົດໝາຍທາງຫຼວງສະຫງວນເບື້ອງລະ 10 ແມັດ ນັບຈາກໃຈກາງທາງອອກໄປ.

3.2. ຊ່ວງຜ່ານເຂດພູ, ປ່າ ຫຼື ເຂດທຳການຜະລິດ ນອກຈາກທົ່ງນາ ແມ່ນເຫັນດີໃຫ້ສະຫງວນເບື້ອງລະ 25 ແມັດ ນັບຈາກໃຈກາງທາງອອກໄປ ເນື່ອງຈາກວ່າປ້ອງກັນການຖາງປ່າເຮັດໄຮ່ຂອງປະຊາຊົນ

- ເຂດແຫຼ່ງທ່ອງທ່ຽວ ແລະ ທຸລະກັນດານ ພິເສດແມ່ນເຫັນດີອີງໃຫ້ສະຫງວນເບື້ອງລະ 50 ແມັດ ເພື່ອຫຼີກລຽງການບຸກລຸກ ຫຼື ທຳລາຍທຳມະຊາດ.

4. ທາງຊົນນະບົດ

4.1. ຊ່ວງຜ່ານເທດສະບານຂອງເມືອງ, ກຸ່ມບ້ານ ແລະ ຕົວເມືອງນ້ອຍ ທີ່ມີຜັງເມືອງ, ຜັງບ້ານແລ້ວ ແມ່ນໃຫ້ອີງຕາມແຜນຜັງ ຕັ້ງປະຕິບັດດັ່ງກ່າວໃນການຈັດ, ສ່ວນບ້ານ ຫຼື ຊຸມຊົນ, ທົ່ງນາ ແລະ ສວນທີ່ບໍ່ທັນມີແຜນຜັງ ແມ່ນອີງຕາມກົດໝາຍທາງຫຼວງສະຫງວນເບື້ອງລະ 5 ແມັດ ນັບຈາກໃຈກາງທາງອອກໄປ.

4.2. ຊ່ວງຜ່ານເຂດພູ, ປ່າ ຫຼື ເຂດທຳການຜະລິດນອກຈາກທົ່ງນາແມ່ນສະຫງວນເບື້ອງລະ 25 ແມັດ ນັບຈາກໃຈກາງທາງອອກໄປ ເນື່ອງຈາກວ່າປ້ອງກັນການຖາງປ່າເຮັດໄຮ່ຂອງປະຊາຊົນ.

- ເຂດແຫຼ່ງທ່ອງທ່ຽວ ແລະ ທຸລະກັນດານ ພິເສດແມ່ນເຫັນດີໃຫ້ສະຫງວນເບື້ອງລະ 50 ແມັດ ເພື່ອຫຼີກລຽງການບຸກລຸກ ຫຼື ທຳລາຍທຳມະຊາດ.

ມາດຕາ 02: .ໃຫ້ທຸກພາກສ່ວນຈົ່ງຮັບຮູ້ ແລະ ພ້ອມກັນຈັດຕັ້ງປະຕິບັດຕາມຢ່າງເຂັ້ມງວດ. ຖ້າພາກສ່ວນໃດ, ບຸກຄົນໃດຫາກຝ່າຝືນບໍ່ປະຕິບັດຕາມແມ່ນຈະໄດ້ຖືກດຳເນີນມາດຕະການຕາມລະບຽບກົດໝາຍ.

ມາດຕາ 03: ຂໍ້ຕົກລົງສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ເຈົ້າແຂວງຫົວພັນ

<u>ບ່ອນນຳສົ່ງ:</u>

1. ບັນດາພະແນກການອ້ອມຂ້າງແຂວງບ່ອນລະ 1 ສະບັບ
2. ບັນດາເມືອງທົ່ວແຂວງເມືອງລະ 1 ສະບັບ
3. ສຳເນົາ 2 ສະບັບ

ວັນໄຊ ແພງຊຸມມາ

Vanxay PHENGSOUMMA